ສະບູກາເຟ

ທຸລະກິດໄວໜຸ່ມໃຈກາເຟ ສ້າງມູນຄ່າເພີ່ມໃຫ້ແກ່ຂີ້ກາເຟ

ຂໍ້ມູນທົ່ວໄປ:

ຊື່ກຸ່ມ: ກຸ່ມສະບູໃຈກາເຟ, ເມືອງປາກຊ່ອງ, ແຂວງຈຳປາສັກ
ຜູ້ຕິດຕໍ່: ພອນວິໄລ ສີລາເພັດ
ເບີໂທຕິດຕໍ່: 020 9871 4788

ຄວາມເປັນມາ:

ຂີ້ກາເຟ ຫຼື ກາກກາເຟ ຖືກຖິ້ມເປັນຂີ້ເຫຍື້ອໂດຍບໍ່ໄດ້ນຳໃຊ້ປະໂຫຍດຫຍັງໃນແຕ່ລະມື້ ເປັນຈຳນວນຫຼາຍທີ່ຮ້ານກາເຟໃຈ ເມືອງປາກຊ່ອງ ແຂວງຈຳປາສັກ. ເມື່ອເຫັນບັນຫາຄືດັ່ງນັ້ນສະມາຊິກໄວໜຸ່ມຈຶ່ງມີຄວາມຄິດທີ່ຢາກນຳໃຊ້ຂີ້ກາເຟໃຫ້ເປັນປະໂຫຍດຫຼາຍຂຶ້ນ ພ້ອມທັງຕ້ອງການສ້າງມູນຄ່າເພີ່ມ ແລະ ສ້າງລາຍຮັບໃຫ້ແກ່ກຸ່ມອີກດ້ວຍ.

ໄວໜຸ່ມຈຳນວນຫຼາຍທີ່ຖອຍໜີຈາກວຽກງານກະສິກຳ ແລະ ບໍ່ເຫັນຄວາມສຳຄັນຂອງວຽກງານກະສິກຳ ເພາະພວກເຂົາເຊື່ອວ່າວຽກກະສິກຳເປັນວຽກງານທີ່ໃຊ້ແຮງງານໜັກ. ສະນັ້ນ, ໃຜໆກໍ່ມີຄວາມຄິດທີ່ຕ້ອງການຢາກເປັນພະນັກງານປະຈຳ ຕາມອົງການຈັດຕັ້ງລັດ, ອົງການສາກົນ ແລະ ບໍລິສັດຕ່າງໆ ເພື່ອຫວັງມີວຽກງານທີ່ໝັ້ນຄົງ. ດັ່ງນັ້ນ, ການສົ່ງເສີມໄວໜຸ່ມໃນວຽກງານກະສິກຳ ແລະ ສົ່ງເສີມທຸລະກິດກະສິກຳ ກໍ່ເປັນບູລິມະສິດວຽກງານຂອງ ເຄືອຂ່າຍຊາວກະສິກອນລາວ ເມື່ອເຫັນໄດ້ຄວາມສຳຄັນຄືດັ່ງກ່າວ, ຈຶ່ງໄດ້ເອື້ອອຳນວຍໃຫ້ແກ່ກຸ່ມໄວໜຸ່ມ ພາຍໃຕ້ສະຫະກອນໃຈກາເຟ ໄດ້ກໍ່ຕັ້ງຂຶ້ນພາຍໃຕ້ຊື່: "ກຸ່ມສະບູໃຈກາເຟ", ໂດຍມີສະມາຊິກທັງໝົດ 15 ຄົນ. ຫຼັງຈາກນັ້ນ ນາງ ພອນວິໄລ ຫົວກຸ່ມກໍ່ໄດ້ຂຽນແຜນການຜະລິດ ສະເໜີຕໍ່ທາງເຄືອຂ່າຍ ແລະ ໄດ້ຮັບການເຫັນດີອານຸມັດຊ່ວຍເຫຼືອເງິນທຶນເບື້ອງຕົ້ນ ຈຳນວນ 8,000,000 ກີບ ເພື່ອຜະລິດສະບູກາເຟຈຳນວນ 1,000 ກ້ອນ ແລະ ເຄືອຂ່າຍໄດ້ສະໜອງຄູຝຶກລົງໃຫ້ຄວາມຮູ້ໃນການເຮັດສະບູກາເຟ ແລະ ຜົງຂັດຜິວໃຫ້ແກ່ກຸ່ມ.

ສະຖານະພາບ:

ກຸ່ມໄວໜຸ່ມ: "ກຸ່ມສະບູໃຈກາເຟ" ໄດ້ສ້າງຕັ້ງຂຶ້ນວັນທີ 1 ກຸມພາ 2018.

ສະມາຊິກກຸ່ມເບື້ອງຕົ້ນມີ 15 ຄົນ ແລະ ປັດຈຸບັນແມ່ນມີ 7 ຄົນ ເຊິ່ງການສະໝັກເຂົ້າຮ່ວມກຸ່ມເປັນສະມາຊິກ ແຕ່ລະຄົນແມ່ນໄດ້ຮ່ວມຫຸ້ນກັນ ເພື່ອໃຊ້ເປັນກອງທຶນລວມໃນການຜະລິດຂອງກຸ່ມ.

ລາຍການຜະລິດຕະພັນຂອງກຸ່ມສະບູໃຈກາເຟ ມີຄື:

1. ສະບູກາກກາເຟສົດ ລາຄາ 15,000 ກີບ ຕໍ່ກ້ອນ
2. ສະບູກາເຟປະສົມຂີ້ໝຶ້ນ ລາຄາ 15,000 ກີບ ຕໍ່ກ້ອນ
3 ສະບູກາເຟປະສົມໂຍເກີດ ລາຄາ 15,000 ກີບ ຕໍ່ກ້ອນ
4. ຜົງຂັດຜິວກາເຟ ລາຄາ 3,000 ກີບ ຕໍ່ຖົງ
5. ຖົງຜົງກາເຟດັບກິ່ນ ຂະໜາດນ້ອຍ ລາຄາ 6,000 ກີບ ແລະ ໃຫຍ່ 8,000 ກີບ ຕໍ່ຖົງ

ຈຸດພິເສດ:

1. ການນຳໃຊ້ສິ່ງເສດເຫຼືອ ໃຫ້ເປັນປະໂຫຍດ ແລະ ສ້າງລາຍໄດ້ເພີ່ມ.
2. ການສົ່ງເສີມໄວໜຸ່ມໃນຂົງເຂດທຸລະກິດກະສິກຳເພື່ອຊ່ວຍສ້າງນັກທຸລະກິດ ກະສິກອນໄວໜຸ່ມ.
3. ການລວມຫຸ້ນຂອງກຸ່ມ ເພື່ອລະດົມທຶນໃນການ ຜະລິດ.

ຜົນໄດ້ຮັບ:

ພາຍຫຼັງດຳເນີນການຜະລິດ ແລະ ຈຳໜ່າຍສະບູກາເຟ ນັບແຕ່ເດືອນກຸມພາ - ຕຸລາ 2018 ກຸ່ມສະບູໃຈກາເຟ ສາມາດຂາຍສະບູໄດ້ 800 ກ້ອນ ຕີກເປັນເງິນຈຳນວນ 10,321,000ກີບ, ເຊິ່ງເປັນກຳໄລທັງໝົດ 2,321,000 ກີບ.

ການປັນຜົນກຳໄລ ແມ່ນອີງຕາມຫຸ້ນສ່ວນທີ່ມີ ໂດຍສະເລ່ຍແຕ່ລະຄົນ ໄດ້ຮັບການປັນຜົນ ໜ້ອຍສຸດ 150,000 ກີບ ແລະ ຫຼາຍສຸດ 300,000 ກີບຕໍ່ບຸກຄົນ.

ແບ່ງອີກ 30%ເປັນເງິນຈຳນວນ 700,000 ກີບ ຂອງຜົນກຳໄລເຂົ້າກອງທຶນກຸ່ມ ເພື່ອເປັນທຶນການຜະລິດໃນງວດຕໍ່ໄປ.

ປີ 2019 ທາງກຸ່ມຈະມີແຜນທີ່ຈະຂະຫຍາຍການຜະລິດຈາກ 1,000 ກ້ອນ ເປັນ 10,000 ກ້ອນ. ສະບູກ້ອນໜຶ່ງໄດ້ກຳໄລເຖິງ 50% .

ຂໍ້ມູນເພີ້ມຕື່ມ: https://www.facebook.com/ສະບູໃຈກະເຟ

ຈັດຕັ້ງປະຕິບັດໂດຍ:
Organized by:

ສະໜັບສະໜຸນໂດຍ:
Supported by: